ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 3418 - --- /ຫກ

ນະຄອນຫຼວງວຽງຈັນ, ວັນທີ 27 ກໍລະກົດ 2023

# ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ທີ່ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການຈັດຊື້ປີ້ຍົນໃຫ້ແກ່ຄະນະນໍາ, ຄູຝຶກ ແລະ ນັກກິລາທີ່ຈະເຂົ້າຮ່ວມແຂ່ງຂັນກິລາຄົນພິການເອຊຽນພາຣາເກມ ຄັ້ງທີ 4 ທີ່ ເມືອງຫາງໂຈ ປະເທດ ສປ.ຈີນ. ໄລຍະການຈັດຕັ້ງປະຕິບັດແມ່ນໃຫ້ທັນເວລາໃນການເດີນທາງ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກວ້າງພາຍໃນ ທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດເບິ່ງເອກະສານປະມູນໄດ້ທີ່ ພະແນກຄຸ້ມຄອງຊັບສິນຂອງລັດ ກົມການເງິນ ກະຊວງສຶກສາທິການ ແລະ ກິລາ ໂທລະສັບ/ແຟັກ: 021 217 206, 020 2222 3244 ຕາມວັນເວລາ ລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ມີຄວາມສົນໃຈໃນການຍື່ນໜັງສືສະເໜີ ຫຼື ສາມາດສອບຖາມລາຍລະອຽດ ທີ່ພະແນກຄຸ້ມຄອງຊັບສິນຂອງລັດ ກົມການເງິນ ກະຊວງສຶກສາທິການ ແລະ ກິລາ, ຖະໜົນເລກ 01 ລ້ານຊ້າງ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ, ໂທລະສັບ/ແຟັກ: 021 217 206, ເລີ່ມແຕ່ວັນທີ 01 ສິງຫາ 2023 ຕາມວັນເວລາ ລັດຖະການ, ໃນລາຄາຊຸດລະ 700.000 ກີບ; ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 425 ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 10:00 ໂມງ ຂອງວັນທີ 05 ກັນຍາ 2023. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຖືກຮັບ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກຊອງຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 05 ກັນຍາ 2023 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
7. ທຸກຊອງປະມູນ ຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ເຊິ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ.

ຫົວໜ້າຫ້ອງການ

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

ນ.ດາລາວອນ ກິດຕິພັນ

สแกนด้วย CamScanner